ພະຍາກອນ ອຽງຈັນ
22–30°C
ວັນພະຫັດ 12/11 · ເມກບາງສ່ວນ

ມະຫາສານ


ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນພະຫັດ 12 ພະຈິກ 2026 · ສະບັບທີ 020 | ສະຫຼຸບຂ່າວປະຈຳວັນພຸດ 11 ພະຈິກ 2026 · 24 ຂ່າວ | 20 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວຕ່າງປະເທດ** · 10:31 ໂມງ · ອ່ານ 99 ຄັ້ງ

ຈັບຕາ! ກະແສລົມວຽນຂົ້ວໂລກອ່ອນກຳລັງໄວຜິດປົກກະຕິ ສ່ຽງປ່ຽນຮູບແບບອາກາດລະດູໜາວໃນຊີກໂລກເໜືອ



ຈັບຕາ! ກະແສລົມວຽນຂົ້ວໂລກອາດອ່ອນກຳລັງໄວຜິດປົກກະຕິ ສ່ຽງປ່ຽນຮູບແບບລະດູໜາວໃນຊີກໂລກເໜືອ


ປະກົດການຜິດປົກກະຕິໃນຊັ້ນບັນຍາກາດເໜືອເຂດອາກຕິກ ກຳລັງດຶງດູດຄວາມສົນໃຈຈາກນັກອຸຕຸນິຍົມວິທະຍາ ຫຼັງມີສັນຍານວ່າກະແສລົມວຽນຂົ້ວໂລກ (Polar Vortex) ໃນຊັ້ນບັນຍາກາດສະຕຣາໂຕສະເຟຍ ອາດເລີ່ມອ່ອນກຳລັງລົງໄວກວ່າປົກກະຕິ ຕັ້ງແຕ່ຕົ້ນເດືອນພະຈິກ 2026.

ຂໍ້ມູນຈາກແບບຈຳລອງພະຍາກອນອາກາດຂອງ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 09:48 ໂມງ

ອຸບັດຕິເຫດຊ້ອນຄັ້ງໃຫຍ່! ທີ່ບັນແກເລຍໝອກໜາປົກຫຸ້ມທາງດ່ວນ ເຮັດໃຫ້ລົດຕຳກັນຕໍ່ເນື່ອງຫຼາຍກວ່າ 70 ຄັນ ເສຍຊີວິດແລ້ວ 12 ຄົນ ບາດເຈັບຈຳນວນຫຼາຍ



ເກີດອຸບັດຕິເຫດຮຸນແຮງ 2 ຈຸດ ເທິງທາງດ່ວນມໍເຕີເວ ຂອງປະເທດບັນແກເລຍ ໂດຍມີລົດຕຳກັນລວມກວ່າ 70 ຄັນ ສົ່ງຜົນໃຫ້ມີຜູ້ເສຍຊີວິດແລ້ວຢ່າງໜ້ອຍ 12 ຄົນ ແລະ ບາດເຈັບອີກຫຼາຍສິບຄົນ

ສຳນັກຂ່າວຕ່າງປະເທດລາຍງານວ່າ ເກີດເຫດລົດຕຳກັນຫຼາຍກວ່າ 70 ຄັນ ໃນ 2 ຈຸດ ຂອງຖະໜົນທາງດ່ວນ “ທຣາເຄຍ ມໍເຕີເວ” (Trakia Motorway) ໃກ້ກັບເມືອງຊິມນິດຊາ (Zimnitsa) ທາງຕອນໃຕ້ຂອງປະເທດບັນ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
3 ຂ່າວພາຍໃນ
6 ເສດຖະກິດ-ສັງຄົມ
7 ເຫດການ
18 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
19 ກິລາ



◆ **ເສດຖະກິດ-ສັງຄົມ** · 13:05 ໂມງ

ລຸງ ສົມຈິດ ສ້າງ ເສັ້ນທາງຊີວິດດ້ວຍ ຄວາມດຸໝັ່ນ ສາມາ...

ອ່ານໜ້າ 6 ▸



◆ **ຂ່າວພາຍໃນ** · 13:29 ໂມງ

ເຈົ້າໜ້າທີ່ລົງກວດລ້າງ ກຸ່ມກໍ່ອາຊະຍາກຳທາງ ອິນເຕີເນັດ 2 ຈຸດ...

ອ່ານໜ້າ 3 ▸



◆ **ຂ່າວພາຍໃນ** · 10:07 ໂມງ

ກວດພົບມີການຊຸກ ເຊື່ອງແຮ່ທາດທີ່ບໍ່ ຖືກຕ້ອງຕາມລະບຽ...

ອ່ານໜ້າ 3 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ຈັບຕາ! ກະແສລົມວຽນຂົ້ວໂລກອ່ອນກຳລັງໄວຜິດປົກກະຕິ ສ່ຽງ... (ຕໍ່ຈາກໜ້າ 1)

ສູນພະຍາກອນອາກາດໄລຍະກາງແຫ່ງເອີຣົບ (ECMWF) ຊີ້ວ່າ ກະແສລົມທີ່ພັດອ້ອມຮອບຂົ້ວໂລກເໜືອອາດມີການປ່ຽນແປງທິດທາງໃນໄລຍະສັ້ນ ຫາກເກີດຂຶ້ນຈິງ ອາດເພີ່ມໂອກາດທີ່ມວນອາກາດເຢັນຈາກເຂດອາກຕິກ ແລະໄຊບີເຣຍຈະເຄື່ອນຕົວລົງສູ່ພື້ນທີ່ລະຕິຈູດຕ່ຳໃນຊີກໂລກເໜືອ.

Polar Vortex ແມ່ນຫຍັງ ແລະເປັນຫຍັງຈຶ່ງສຳຄັນ?

ຮູບປຽບທຽບກະແສລົມວຽນຂົ້ວໂລກແບບປົກກະຕິ ແລະແບບປັ່ນປ່ວນ/ພາບປະກອບ: NOAA – National Oceanic and Atmospheric Administration

Polar Vortex ຫຼື ກະແສລົມວຽນຂົ້ວໂລກ ແມ່ນລະບົບລົມກຳລັງແຮງທີ່ພັດອ້ອມຮອບມວນອາກາດເຢັນໃນເຂດຂົ້ວໂລກ ໂດຍຢູ່ໃນຊັ້ນບັນຍາກາດສະຕຣາໂຕສເຟຍ ເຊິ່ງມີລະດັບຄວາມສູງປະມານ 10-50 ກິໂລແມັດ.

ໂດຍປົກກະຕິ ລະບົບນີ້ຈະແຂງແຮງຂຶ້ນໃນຊ່ວງລະດູໃບໄມ້ຫຼົ່ນ ແລະມີກຳລັງແຮງສຸດປະມານເດືອນມັງກອນ ກ່ອນຈະອ່ອນກຳລັງລົງໃນລະດູໃບໄມ້ປົ່ງ.

ແຕ່ຖ້າກະແສລົມວຽນຂົ້ວໂລກອ່ອນກຳລັງລົງ, ບິດເບືອນ ຫຼືແຍກອອກເປັນສອງສ່ວນ ອາດສົ່ງຜົນຕໍ່ຮູບແບບການໝຸນວຽນຂອງອາກາດ ແລະເພີ່ມໂອກາດໃຫ້ມວນອາກາດເຢັນເຄື່ອນລົງສູ່ພື້ນທີ່ທາງຕອນໃຕ້ຫຼາຍຂຶ້ນ.

ການອ່ອນກຳລັງອາດກະທົບຫຼາຍພື້ນທີ່

ຜົນກະທົບຈາກການປ່ຽນແປງຂອງ Polar Vortex ອາດແຕກຕ່າງກັນໄປຕາມພູມິພາກ ໂດຍບາງພື້ນທີ່ໃນເອີຣົບເໜືອ ແລະເອີຣົບຕາເວັນອອກ ອາດມີໂອກາດປະເຊີນກັບອາກາດໜາວຈັດ ແລະພາຍຸລະດູໜາວ.

ສ່ວນໃນອາຊີ ມວນອາກາດເຢັນຈາກໄຊບີເຣຍອາດເຄື່ອນຕົວເຂົ້າສູ່ພາກເໜືອຂອງຈີນ ແລະບາງສ່ວນຂອງເອເຊຍຕາເວັນອອກ ຂະນະທີ່ອາເມລິກາເໜືອກໍອາດມີຄວາມສ່ຽງຕໍ່ອາກາດໜາວຈັດ, ຫິມະຕົກໜັກ ແລະພາຍຸລະດູໜາວໃນບາງພື້ນທີ່.

ຢ່າງໃດກໍຕາມ ການອ່ອນກຳລັງຂອງ Polar Vortex ບໍ່ໄດ້ໝາຍຄວາມວ່າທຸກປະເທດໃນຊີກໂລກເໜືອຈະມີອາກາດໜາວຈັດພ້ອມກັນ ເພາະບາງພື້ນທີ່ອາດມີອຸນຫະພູມສູງກວ່າຄ່າສະເລ່ຍ ຫຼືມີຝົນຕົກຜິດລະດູການ.

El Niño ອາດເປັນປັດໄຈຮ່ວມ

ນັກອຸຕຸນິຍົມວິທະຍາບາງສ່ວນມອງວ່າ ປະກົດການ El Niño ໃນມະຫາສະໝຸດປາຊີຟິກ ອາດມີສ່ວນກະຕຸ້ນຄື້ນໃນຊັ້ນບັນຍາກາດ ເຮັດໃຫ້ກະແສລົມວຽນຂົ້ວໂລກເກີດຄວາມປັ່ນປ່ວນ.

ແຕ່ນັກວິຊາການເຕືອນວ່າ ຍັງໄວເກີນໄປທີ່ຈະສະຫຼຸບວ່າ El Niño ເປັນສາເຫດໂດຍກົງຂອງການປ່ຽນແປງຄັ້ງນີ້.

ຄວາມສ່ຽງຕໍ່ນ້ຳ ແລະພະລັງງານ

ນອກຈາກອາກາດໜາວຈັດແລ້ວ ການປ່ຽນແປງຮູບແບບສະພາບອາກາດຍັງອາດສົ່ງຜົນຕໍ່ປະລິມານນ້ຳຝົນ ແລະຊັບພະຍາກອນນ້ຳໃນບາງພື້ນທີ່ ໂດຍອາດເກີດໄລຍະແຫ້ງແລ້ງທີ່ຍາວນານ ຫຼືຝົນຕົກຫຼາຍຜິດປົກກະຕິ.

ຂະນະດຽວກັນ ອາກາດໜາວຈັດອາດເຮັດໃຫ້ຄວາມຕ້ອງການໃຊ້ໄຟຟ້າ ແລະກ໊າຊເພື່ອທຳຄວາມອຸ່ນເພີ່ມຂຶ້ນ ເຊິ່ງອາດສ້າງແຮງກົດດັນຕໍ່ຕະຫຼາດພະລັງງານ ໂດຍສະເພາະໃນເອີຣົບ ທີ່ຕ້ອງແຂ່ງຂັນກັບຕະຫຼາດເອເຊຍໃນການຈັດຊື້ກ໊າຊທຳມະຊາດເຫຼວ (LNG).

ສະຫຼຸບ: ການອ່ອນກຳລັງຂອງ Polar Vortex ໃນຊ່ວງຕົ້ນລະດູໜາວເປັນສັນຍານທີ່ນັກອຸຕຸນິຍົມວິທະຍາກຳລັງຕິດຕາມຢ່າງໃກ້ຊິດ ເພາະອາດສົ່ງຜົນຕໍ່ສະພາບອາກາດໃນຫຼາຍພາກພື້ນຂອງຊີກໂລກເໜືອ. ແຕ່ຍັງບໍ່ສາມາດຢືນຢັນໄດ້ວ່າລະດູໜາວປີນີ້ຈະໜາວຮຸນແຮງກວ່າທຸກປີ ຫຼືຈະເກີດພາຍຸຫິມະຮຸນແຮງໃນທຸກພື້ນທີ່.

ຈາກແຫຼ່ງຂ່າວອ້າງອີງ 3 ແຫ່ງ

1. RTE (Ireland) – ລາຍງານກ່ຽວກັບການອ່ອນກຳລັງຂອງ Polar Vortex ໄວຜິດປົກກະຕິ.

2. UK Met Office ຂໍ້ມູນວິຊາການກ່ຽວກັບ Polar Vortex ແລະ Sudden Stratospheric Warming (SSW).

3. University of Reading – ບົດວິເຄາະຈາກນັກວິຊາການ Andrew Charlton-Perez ກ່ຽວກັບສັນຍານການອ່ອນກຳລັງຂອງກະແສລົມວຽນຂົ້ວໂລກ.

ອຸບັດຕິເຫດຊ້ອນຄັ້ງໃຫຍ່! ທີ່ບັນແກເລຍໝອກໜາປົກໜຸ້ມຫາງ... (ຕໍ່ຈາກໜ້າ 1)

ແກເລຍ ໃນວັນທີ 10 ພະຈິກ 2026 ສົ່ງຜົນໃຫ້ມີຜູ້ເສຍຊີວິດແລ້ວຢ່າງໜ້ອຍ 12 ຄົນ ແລະບາດເຈັບອີກຫຼາຍກວ່າ 50 ຄົນ

ເຈົ້າໜ້າທີ່ບັນແກເລຍລະບຸວ່າ ສະພາບອາກາດມືໝອກລົງໜາແໜ້ນ ເຮັດໃຫ້ທັດສະນະວິໄສໃນການມອງເຫັນຫຼຸດລົງຢ່າງຫຼາຍ ເຊິ່ງຄາດວ່າເປັນສາເຫດຫຼັກຂອງອຸບັດຕິເຫດຈຸດທີ 1 ເທິງເສັ້ນທາງຝັ່ງມຸ່ງໜ້າໄປທາງຕາເວັນອອກ.

ສ່ວນອຸບັດຕິເຫດຈຸດທີ 2 ຢູ່ເສັ້ນທາງຝັ່ງມຸ່ງໜ້າໄປຍັງກຸງໂຊເຟຍ (Sofia) ຄາດວ່າເກີດຈາກໝອກໜາ ແລະການທີ່ຜູ້ຂັບຂີ່ເສຍສະມາທິ ເນື່ອງຈາກຫັນໄປສົນໃຈເບິ່ງເຫດລິດຕຳກັນໃນຈຸດທຳອິດ

ນອກຈາກນີ້ ເຈົ້າໜ້າທີ່ຍັງເປີດເຜີຍວ່າ ພື້ນຜິວຖະໜົນທີ່ປຽກ ແລະການໃຊ້ຄວາມໄວທີ່ບໍ່ເໝາະສົມກັບສະພາບອາກາດ ກໍເປັນອີກປັດໄຈທີ່ມີສ່ວນເຮັດໃຫ້ເກີດເຫດການດັ່ງກ່າວ ສົ່ງຜົນໃຫ້ທາງດ່ວນທຣາເຄຍ ຕ້ອງປິດການສັນຈອນຊົ່ວຄາວ ເພື່ອໃຫ້ເຈົ້າໜ້າທີ່ເຂົ້າເຄລຍພື້ນທີ່ ແລະຈັດການກັບຊາກລົດທີ່ເສຍຫາຍ

ນາງ ຄາເທຍ ອີຟໂຄວາ (Katia Ivkova) ລັດຖະມົນຕີວ່າການກະຊວງສາທາລະນະສຸກຂອງບັນແກເລຍ ລະບຸວ່າ ມີຜູ້ເສຍຊີວິດໃນຈຸດເກີດເຫດທັນທີ 11 ຄົນ ແລະເສຍຊີວິດເພີ່ມອີກ 1 ຄົນຢູ່ໂຮງໝໍ ລວມເປັນ 12 ຄົນ. ສ່ວນຜູ້ບາດເຈັບປະມານ 50 ຄົນ ຖືກນຳສົ່ງໄປປິ່ນປົວຢູ່ໂຮງໝໍໃນແຂວງຢຳໂບລ, ສະລີເວນ ແລະເບີກາສ.

ຂະນະທີ່ ທ່ານ ຈໍຈີ ຊາລາຄອຟ (Georgi Shalakov) ຜູ້ວ່າລາຊະການແຂວງຢຳໂບລ ເປີດເຜີຍວ່າ ໄດ້ຮັບແຈ້ງເຫດໃນເວລາ 07:10 ໂມງ ຂອງວັນອັງຄານ (10 ພະຈິກ) ຕາມເວລາທ້ອງຖິ່ນ. ເຈົ້າໜ້າທີ່ຈຳເປັນຕ້ອງຕັດແຜງກັ້ນຖະໜົນ ເພື່ອເຂົ້າໄປຊ່ວຍເຫຼືອຜູ້ທີ່ຕິດຄ້າງຢູ່ພາຍໃນລົດ. ນອກຈາກນັ້ນ ໝອກທີ່ລົງໜາແໜ້ນຫຼາຍ ຍັງເຮັດໃຫ້ບໍ່ສາມາດນຳໃຊ້ເຮລິຄອບເຕີໃນການລຳລຽງອົບພະຍົບຜູ້ບາດເຈັບໄດ້.

ດ້ານຜູ້ລອດຊີວິດຄົນໜຶ່ງເລົ່າວ່າ ໝອກໜາຫຼາຍຈົນບໍ່ສາມາດມອງເຫັນເສັ້ນທາງໄດ້ ແລະລາວຕ້ອງໄດ້ຊ່ວຍດຶງຊາຍຄົນໜຶ່ງອອກຈາກລົດທີ່ກຳລັງລຸກໄໝ້. ສ່ວນພະຍານຜູ້ເຫັນເຫດການອີກຄົນໜຶ່ງລະບຸວ່າ ມີລົດບັນທຸກຂັບຕາມຫຼັງລາວມາເຖິງ 4 ຄັນ ແລະຮູ້ສຶກໂຊກດີຫຼາຍທີ່ສາມາດລອດຊີວິດມາໄດ້.

ທັງນີ້ ໃນຂະນະເກີດເຫດ ທ່ານ ຣູເມນ ຣາເດຟ (Rumen Radev) ນາຍົກລັດຖະມົນຕີບັນແກເລຍ ກຳລັງຮ່ວມຖະແຫຼງຂ່າວກັບ ນາງ ເອີຊຸລາ ວອນ ແດຣ ເລເຢນ (Ursula von der Leyen) ປະທານຄະນະກຳມະການເອີຣົບ. ເຮັດໃຫ້ທ່ານຕ້ອງຢຸດການຖະແຫຼງຂ່າວທັນທີ ເພື່ອເດີນທາງໄປຍັງພື້ນທີ່ເກີດເຫດ ພ້ອມທັງປະກາດໃຫ້ວັນພຸດ (11 ພະຈິກ) ເປັນ “ວັນໄວ້ອາໄລແຫ່ງຊາດ” ເພື່ອລຳລຶກເຖິງຜູ້ເສຍຊີວິດຈາກອຸບັດຕິເຫດຄັ້ງນີ້.

ທີ່ມາຂ່າວ: bbc/ap

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 13:29 ໂມງ · ອ່ານ 14 ຄັ້ງ

ເຈົ້າໜ້າທີ່ລົງກວດລ້າງກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ 2 ຈຸດ ກັກຕົວຜູ້ຖືກຫາ ຄົນຕ່າງປະເທດໄດ້ 10 ຄົນ



ເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ລົງແກ້ໄຂກຸ່ມກໍ່ຊະຍາກຳທາງອິນເຕີເນັດ ຢູ່ບ້ານສ້າງເຫວີຍ ແລະ ບ້ານທາດຂາວ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ໃນອາທິດຜ່ານມາ ສາມາດກັກຕົວຜູ້ຖືກຫາເປັນຄົນຕ່າງປະເທດໄດ້ທັງໝົດ 10 ຄົນ.

ຈຸດທີ 1. ເຮືອນໃຫ້ເຊົ່າຢູ່ບ້ານສ້າງເຫວີຍ ກັກຕົວຜູ້ຖືກຫາໄດ້ 4 ຄົນ; ໃນນີ້ ຄົນຈີນ 3 ຄົນ, ມຽນມາ 1 ຄົນ; ຍຶດເຄື່ອງຂອງກາງ ມີ ໂທລະສັບມືຖື 6 ເຄື່ອງ, ຄອມພິວເຕີຕັ້ງໂຕະ 1 ເຄື່ອງ.

ຈຸດທີ 2. ຢູ່ເຮືອນໃຫ້ເຊົ່າອາຊຽນ ວິນລາ ຢູ່ບ້ານທາດຂາວ ກັກຕົວຜູ້ຖືກຫາ ເປັນຄົນສັນຊາດຈີນ 6 ຄົນ, ຍຶດເຄື່ອງຂອງກາງໄດ້ ໂທລະສັບມືຖື 12 ເຄື່ອງ, ຄອມພິວເຕີໂນດບຸກ 1 ເຄື່ອງ.

ທີ່ມາ: ຄວາມສະຫງົບ Lao Security News

ຂ່າວພາຍໃນ · 10:07 ໂມງ · ອ່ານ 14 ຄັ້ງ

ກວດພົບມີການຊຸກເຊື່ອງແຮ່ທາດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ 20 ໂຕນ ຖືກຝັງດິນໄວ້ໃນ ໂຮງງານຫຼອມເສດໂລຫະ ຢູ່ບ້ານນາຄຳຈວງ ເມືອງໄຊບົວທອງ ແຂວງຄຳມ່ວນ



ໃນວັນທີ 5 ພະຈິກ 2026 ເຈົ້າໜ້າທີ່ສະເພາະກິດ ແຂວງ 337/ຄປຂ ໄດ້ຮັບການລາຍງານຈາກພົນລະເມືອງດີ ວ່າໄດ້ມີກຸ່ມພໍ່ຄ້າຄົນຈີນ ບໍ່ຮູ້ຊື່ ໄດ້ລັກລອບ ເກັບຊື້-ຂາຍ ແຮ່ທາດ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ໄດ້ຊຸກເຊື່ອງແຮ່ທາດໄວ້ ຢູ່ທີ່ໂຮງງານຫຼອມເສດໂລຫະໃຕ້ຟ້າ ຕັ້ງຢູ່ບ້ານນາຄຳຈວງ, ເມືອງໄຊບົວທອງ, ແຂວງຄຳມ່ວນ.

ຕໍ່ມາໃນວັນທີ 6 ພະຈິກ 2026 ເຈົ້າໜ້າທີ່ສະເພາະກິດແຂວງຄຳມ່ວນ ຈຶ່ງໄດ້ສົມທົບ ກັບ ການຈັດຕັ້ງຂັ້ນເມືອງ ແລະ ຂະແໜງການກ່ຽວຂ້ອງ ຂອງເມືອງໄຊບົວທອງ, ນຳໂດຍ ທ່ານ ສີສຸກ ພິມມະສອນ ຮອງປະທານ ອົງການກວດກາລັດແຂວງຄຳມ່ວນ, ຫົວໜ້າ ກອງເລຂາສະເພາະກິດ ແຂວງ, ທ່ານ ອິນແກ້ວ ຈັນທະເທບ ຄະນະປະຈຳພັກ ເມືອງ.

ຮອງປະທານຄະນະກຳມະການ ປົກຄອງເມືອງ ແລະ ຂະແໜງການ ກ່ຽວຂ້ອງ ຂັ້ນແຂວງ ແລະ ເມືອງ, ລົງ ກວດກາສະຖານທີ່ພາຍໃນໂຮງງານ ແລະ ໄດ້ພົບເຫັນ ແຮ່ທາດຈຳນວນ 20 ໂຕນ ໄດ້ຊຸກເຊື່ອງຝັງດິນໄວ້ ຢູ່ບໍລິເວນເດີ່ນ ຂອງໂຮງງານດັ່ງກ່າວ, ຈາກນັ້ນທາງການ ຈັດຕັ້ງຂັ້ນເມືອງ ແລະ ຂະແໜງການ ກ່ຽວຂ້ອງ ຂອງເມືອງໄຊບົວທອງ ຈຶ່ງໄດ້ ມອບແຮ່ທາດຈຳນວນດັ່ງກ່າວ ໃຫ້ ເຈົ້າໜ້າທີ່ສະເພາະກິດແຂວງ ເຄື່ອນ ຍ້າຍໄປເກັບຮັກສາໄວ້ ຢູ່ທີ່ ອົງການກວດ ກາລັດແຂວງ ຄຳມ່ວນ ເພື່ອສືບຕໍ່ດຳເນີນ ການສືບສວນ-ສອບສວນ ຫາຜູ້ກະທຳຜິດ ມາດຳເນີນຄະດີ ຕາມລະບຽບກົດໝາຍ.

ທີ່ມາ: ໂຄສະນາອົບຮົມເມືອງໄຊ ບົວທອງ

ຂ່າວພາຍໃນ · 16:32 ໂມງ · ອ່ານ 11 ຄັ້ງ

ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ອາສາສະໝັກຍີ່ປຸ່ນ



ໃນຕອນເຊົ້າວັນທີ 11 ພະຈິກ 2026 ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ສະເຫຼີມໄຊ ກົມມະສິດ, ນາຍົກລັດຖະມົນຕີ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ອາສາສະໝັກຍີ່ປຸ່ນ ເຊິ່ງນຳໂດຍທ່ານ ໂຄອິຊຸມິ ຊິໂຕມຸ (H.E Mr. KOIZUMI Tsutomu) ເອກອັກຄະລັດຖະທູດຍີ່ປຸ່ນ ປະຈຳລາວ ແລະ ທ່ານ ຮາຍະກາວະ ຢູໂຮະ (Mr. HAYAKAWA Yuho) ຮອງປະທານ ອາວຸໂສ ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ຈາກສຳນັກງານໃຫຍ່ທີ່ໂຕກຽວ ປະເທດຍີ່ປຸ່ນ ທີ່ໄດ້ເດີນທາງມາຢ້ຽມຢາມ ແລະ ຕິດຕາມສະພາບການຊ່ວຍເຫຼືອຂອງລັດຖະບານຍີ່ປຸ່ນ ໃຫ້ແກ່ ສປປ ລາວ.

ທ່ານ ນາຍົກລັດຖະມົນຕີ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການພົວພັນຮ່ວມມືຂອງສອງປະເທດ ບົນພື້ນຖານຂອບ “ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ” ແລະ ສາຍພົວພັນມິດຕະພາບອັນແໜ້ນແຟ້ນ ເວົ້າລວມ, ເວົ້າສະເພາະ ແມ່ນການປະຕິບັດໜ້າທີ່ຂອງອາສາສະໝັກຍີ່ປຸ່ນ ຢູ່ ສປປ ລາວ ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ການພັດທະນາຊົນນະບົດລຶບລ້າງຄວາມທຸກຍາກຂອງປະຊາຊົນ ຕະຫຼອດໄລຍະ 60 ປີທີ່ຜ່ານມາ, ເຮັດໃຫ້ໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງ ແລະ ໝາກຜົນຂອງການຮ່ວມມື ທັງລັດຖະບານ ແລະ ປະຊາຊົນ ສອງປະເທດນັບມື້ແໜ້ນແຟ້ນ ແລະ ເກີດດອກອອກຜົນເປັນກ້າວໆ; ພ້ອມນັ້ນ, ທ່ານ ນາຍົກລັດຖະມົນຕີ ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນລາວ ໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫຼືອຢ່າງມີປະສິດທິຜົນ ໃນຂົງເຂດກະສິກຳ, ການພັດທະນາຊົນນະບົດ, ສາທາລະນະສຸກ, ການສຶກສາ, ແລະ ຂົງເຂດອື່ນໆ ເຊິ່ງການຊ່ວຍເຫຼືອດັ່ງກ່າວ ໄດ້ກາຍເປັນທ່າແຮງອັນສຳຄັນ ໃຫ້ແກ່ການສ້າງສາພັດທະນາ ສປປ ລາວ ຢ່າງແທ້ຈິງ, ທັງສ້າງກາລະໂອກາດໃຫ້ປະຊາຊົນທັງສອງຊາດ ລາວ-ຍີ່ປຸ່ນ ສາມາດເຂົ້າໃຈທາງດ້ານພາສາ, ວັດທະນະທຳ, ຮີດຄອງປະເພນີ...

ນອກນັ້ນ, ຍັງໄດ້ສະເໜີທ່ານເອກອັກຄະລັດຖະທູດ ກໍຄືລັດຖະບານຍີ່ປຸ່ນ ສືບຕໍ່ສົ່ງອາສາສະໝັກຂອງຕົນ ມາປະຕິບັດໜ້າທີ່ຢູ່ ສປປ ລາວ ຕາມຂະແໜງການ ທີ່ ສປປ ລາວ ມີຄວາມຈຳເປັນ ແລະ ຮຽກຮ້ອງຕ້ອງການ ໃນປັດຈຸບັນ ກໍຄືອະນາຄົດ ໂດຍເລືອກເຟັ້ນເອົາອາສາສະໝັກທີ່ມີບົດຮຽນ, ປະສົບການ ແລະ ມີຄວາມຮູ້ຄວາມສາມາດສະເພາະດ້ານ ເພື່ອມາຊ່ວຍຂະແໜງການ ແລະ ທ້ອງຖິ່ນຕ່າງໆ; ສືບຕໍ່ໃຫ້ຄວາມຮ່ວມມື ແລະ ຖ່າຍທອດຄວາມຮູ້ຄວາມສາມາດ ແລະ ເຕັກໂນໂລຊີ ໃຫ້ແກ່ວິຊາການຂອງລາວ; ຮ່ວມເຮັດວຽກກັບອົງການປົກຄອງທ້ອງຖິ່ນ ຮຽນຮູ້ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ເພື່ອປະກອບສ່ວນເຮັດໃຫ້ສາຍພົວພັນມິດຕະພາບຂອງສອງປະເທດ ນັບມື້ນັບໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ.

ໃນຕອນທ້າຍ ຍັງໄດ້ສະແດງຄວາມຮູ້ສຶກປະທັບໃຈ ຕໍ່ການເສຍສະຫຼະ, ການອຸທິດສະຕິປັນຍາ, ເຫື່ອແຮງ ຂອງບັນດາອາສາສະໝັກຍີ່ປຸ່ນ ຕະຫຼອດໄລຍະຜ່ານມາ ແລະ ເຊື່ອໝັ້ນວ່າ ບັນດາອາສາສະໝັກ ຈະສືບຕໍ່ນຳເອົາຄວາມຊົງຈຳ, ຄວາມຮູ້ສຶກທີ່ດີ ໄປຖ່າຍທອດ ໃຫ້ປະຊາຊົນຍີ່ປຸ່ນ ໄດ້ຮັບຮູ້ ແລະ ເຂົ້າໃຈ.

ທ່ານ ເອກອັກຄະຣາຊະທູດຍີ່ປຸ່ນ ປະຈຳລາວ ຕາງໜ້າຄະນະທີ່ເຂົ້າຢ້ຽມ ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ຂອງທ່ານ ນາຍົກລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂອງ ສປປ ລາວ, ພ້ອມທັງ ຕີລາຄາສູງ ການພົວພັນຮ່ວມມື ລະຫວ່າງ ຍີ່ປຸ່ນ ແລະ ສປປ ລາວ ໃນໄລຍະຜ່ານມາ ແລະ ສະແດງຄວາມຂອບໃຈ ຕໍ່ລັດຖະບານລາວ ທີ່ໄດ້ສະໜັບສະໜຸນ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ອາສາສະໝັກຍີ່ປຸ່ນ ໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນເອງ ເຮັດໃຫ້ມີຜົນສຳເລັດທີ່ພົ້ນເດັ່ນຫຼາຍດ້ານ. ນັບແຕ່ປີ 1965 ເປັນຕົ້ນມາ, ອົງການ JICA ໄດ້ຈັດສົ່ງອາສາສະໝັກຍີ່ປຸ່ນມາປະຕິບັດໜ້າທີ່ ຫຼາຍກວ່າ 1,133 ຄົນ, ປັດຈຸບັນ ມີອາສາສະໝັກຍີ່ປຸ່ນ ຈຳນວນ 40 ທ່ານ ທີ່ປະຈຳການຢູ່ຂະແໜງການຕ່າງໆ ໃນຂອບເຂດທົ່ວປະເທດ ເພື່ອແລກປ່ຽນ, ຖ່າຍທອດບົດຮຽນ ທາງດ້ານເຕັກນິກວິຊາການ ໃຫ້ພະນັກງານທີ່ກ່ຽວຂ້ອງ ຂອງ ສປປ ລາວ ເປັນຕົ້ນ ຂະແໜງສຶກສາທິການ ແລະ ກິລາ, ສາທາລະນະສຸກ, ກະສິກຳ ແລະ ປ່າໄມ້, ການພັດທະນາຊົນນະບົດ ແລະ ອື່ນໆ.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 13:27 ໂມງ · ອ່ານ 5 ຄັ້ງ

ກອງປະຊຸມເພື່ອພັດທະນາການຮ່ວມມືດ້ານການປົກປ້ອງ ແລະ ການສົ່ງຕໍ່ເດັກ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ



ອາທິດຜ່ານມາ 2026, ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງການພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດ ແຫ່ງຣາຊະອານາຈັກໄທ ຮ່ວມກັບມູນນິທິເພື່ອຄວາມເຂົ້າໃຈເດັກ (foundation of child understanding: FOCUS) ໄດ້ຈັດກອງປະຊຸມເພື່ອພັດທະນາການຮ່ວມມືດ້ານການປົກ ປ້ອງ ແລະ ການສົ່ງຕໍ່ເດັກ ຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ ແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ ສປປ ລາວ ກັບ ພາກເໜືອ ຂອງປະເທດໄທ.

ຫົວໜ້າຜູ້ແທນ ຄະນະຝ່າຍລາວ ນຳໂດຍ ຕາງໜ້າ ກອງເລຂາຄະນະກຳມະການຕ້ານການຄ້າມະນຸດຂັ້ນແຂວງ ທ່ານ ອ່ອນຈັນ ພົມມະທານ ຮອງຫົວໜ້າພະແນກແຮງ ງານ ແລະ ສະຫວັດດີການສັງຄົມແຂວງບໍ່ແກ້ວ ແລະ ຫົວ ໜ້າຄະນະຜູ້ແທນຝ່າຍໄທ ນຳ ໂດຍ ທ່ານ ນໍລະສັກ ສຸກສົມ ບຸນ ຮອງຜູ້ ວ່າຣາຊະການແຂວງຊຽງຮາຍ ພ້ອມດ້ວຍ ຄະ ນະຜູ້ແທນ ທັງສອງຝ່າຍ ເຂົ້າຮ່ວມ ກອງປະຊຸມທີ່ແຂວງຊຽງຮາຍ ປະເທດໄທ .

ກອງປະຊຸມຄັ້ງນີ້, ຈັດຂຶ້ນພາຍໃຕ້ ກອບບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສອງຝ່າຍ ລາວ-ໄທ ເຊິ່ງວຽກ ງານຂອງ ສອງແຂວງລຽບຕາມຊາຍແດນນີ້ ກໍເປັນ ວຽກໜຶ່ງທີ່ບອນໃນແຜນປົດບັນທຶກ ຄວາມເຂົ້າໃຈຂອງສອງລັດຖະ ບານ; ກອງ ປະຊຸມ ໄດ້ປຶກສາຫາລືແລກປ່ຽນກ່ຽວກັບ ການຄຸ້ມຄອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໂດຍໄດ້ຮັບຮອງເອົາ ແຜນດຳເນີນງານກ່ຽວກັບການຮ່ວມ ມື ດ້ານການປົກປ້ອງ ແລະ ສົ່ງຕໍ່ຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ ແລະ ຜູ້ທີ່ມີ ຄວາມສ່ຽງ ລະຫວ່າງ ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ ສປປ ລາວ ແລະ ແຂວງ ຊຽງຮາຍ ປະເທດໄທ ໄລຍະທີ I (ປີ 2027-2028) ມີດັ່ງນີ້: ແຜນງານ ທີ 1. ການປະຕິບັດງານຮ່ວມ ປະກອບມີ: 1 ໂຄງການ 2 ກິດຈະກຳ ແລະ ແຜນງານທີ 2 ການປ້ອງກັນ ປະກອບມີ 2 ໂຄງການ 5 ກິດຈະກຳ.ນອກນັ້ນ, ຍັງເຫັນດີ ຮ່ວມກັນໃຫ້ກຳນົດຈຸດປະສານງານສຳລັບ ການມອບ-ຮັບຜູ້ຖືກເຄາະຮ້າຍຈາກການ ຄ້າມະນຸດ ແລະ ຜູ້ທີ່ມີຄວາມສ່ຽງຈາກ ການຄ້າມະນຸດ ທີ່ ຂົວມິດຕະພາບລາວ-ໄທ ແຫ່ງທີ 4 (ຫ້ວຍຊາຍ-ຊຽງຂອງ) ໂດຍອີງຕາມ SOP ຂັ້ນຕອນການປະຕິບັດ ງານດ້ານການສົ່ງກັບ ແລະ ຝ່າຍໄທສະ ເໜີໃຫ້ຝ່າຍລາວຊ່ວຍຊຸກຍູ້ການປະສານ ງານ ໃຫ້ມີການຮ່ວມມື ໃນການຊ່ວຍເຫຼືອ ສົ່ງກັບເດັກ ທີ່ມີຄວາມສ່ຽງຈາກການ ເຄື່ອນຍ້າຍຖິ່ນຖານ ກັບໜ່ວຍງານທີ່ ກ່ຽວຂ້ອງ ພາຍໃນປະເທດ.

ຂ່າວ: ຄວາມສະຫງົບ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

◆ ເສດຖະກິດ-ສັງຄົມ · 13:05 ໂມງ · ອ່ານ 15 ຄັ້ງ

ລຸງ ສົມຈິດ ສ້າງເສັ້ນທາງຊີວິດດ້ວຍຄວາມດຸໝັ່ນ ສາມາດກວາດລາຍຮັບ 350 ລ້ານກີບຕໍ່ປີ



ຈາກເສັ້ນທາງຊີວິດທີ່ເຄີຍພົບຄວາມຫຍຸ້ງຍາກເຮັດການຜະລິດແບບປະຖົມປະຖານບໍ່ກຸ້ມຢຸ່ກຸ້ມກິນ ກ້າວສູ່ວິຖີນັກທຸລະກິດກະສິກຳຕົວຈິງມັນບໍ່ແມ່ນເລື່ອງທຳມະດາເພາະຕ້ອງໃຊ້ທັງຄວາມອົດທົນ ແລະ ຄວາມດຸໝັ່ນຂະຫຍັນພຽນ. ຈາກເສັ້ນທາງແຫ່ງຄວາມສູ້ຊີວິດຕະຫລອດໄລຍະເວລາ 26 ປີ ລຸງ ສົມຈິດ ລາວລີ ໄດ້ພິສູດໃຫ້ເຫັນແລ້ວວ່າຄວາມດຸໝັ່ນ ແລະ ຄວາມອົດທົນສາມາດສ້າງຊີວິດໃໝ່ ທີ່ສະດວກສະບາຍໄດ້ຢ່າງແທ້ຈິງ. ຖ້າເວົ້າເຖິງເລື່ອງການສ້າງເສດຖະກິດຄອບຄົວຕ້ອງຍົກໃຫ້ຄອບຄົວຂອງລຸງ ສົມຈິດ ລາວລີ ອາຍຸ 70 ປີ, ຊົນເຜົ່າຫໍ້ ບ້ານນາທົ່ງ ເມືອງນາໝໍ້ ແຂວງອຸດົມໄຊ ທີ່ປີນີ້ສາມາດປະກາດຄວາມສຳເລັດດ້ວຍຕົວເລກລາຍຮັບທີ່ໜ້າພາກພູມໃຈຫລັງຫັກຄ່າໃຊ້ຈ່າຍແລ້ວຍັງເຫລືອກຳໄລບໍ່ຕ່ຳກວ່າ 350 ລ້ານກີບ.

ໃນປີ 2026 ນີ້, ລຸງ ສົມຈິດ ໄດ້ລົງທຶນລ້ຽງປາ 4 ໜອງ ໂດຍເລືອກຊື້ພັນປາຄຸນນະພາບຈາກແຂວງຫລວງນ້ຳທາ ເຊັ່ນ: ປານິນ, ປາດຸກ ແລະ ປາໄນ. ມາຮອດປັດຈຸບັນຜົນຜະລິດໃນໜອງເຕັມໄປດ້ວຍປາຂະໜາດໃຫຍ່ລວມແລ້ວ 10 ກວ່າໂຕນ. ສຳລັບການຈຳໜ່າຍກໍໄດ້ຂາຍດີ ໂດຍມີທັງລູກຄ້າໄປຊື້ຮອດໜອງ ແລະ ນຳໄປຂາຍທີ່ຕະຫລາດເມືອງນາໝໍ້ ໃນລາຄາເປັນກັນເອງ 45.000 ຫາ 50.000 ກີບຕໍ່ກິໂລ. ລຸງ ສົມຈິດ ໃຫ້ຮູ້ວ່າ: ຄາດຄະເນລາຍຮັບໝົດປີ 2026 ນີ້ ແມ່ນຈະມີລາຍຮັບຈາກການຂາຍປາປະມານ 500 ລ້ານກີບ; ລາຍຮັບຈາກການປາດຢາງພາລາ ປະມານ 150 ລ້ານກີບຕໍ່ປີ ຊຶ່ງລວມລາຍຮັບທັງໝົດປະມານ 650 ລ້ານກີບ, ຂະນະທີ່ເມື່ອຫັກຕົ້ນທຶນຄ່າຫົວອາຫານ ແລະ ຄ່າໃຊ້ຈ່າຍຕ່າງໆອອກແລ້ວຍັງເຫລືອເງິນແຮ່ບໍ່ຕ່ຳກວ່າ 350 ລ້ານກີບ.

ກ່ອນຈະມີຜົນສຳເລັດໃນມື້ນີ້, ລຸງ ສົມຈິດ ໄດ້ເລົ່າເຖິງຄວາມຫລັງດ້ວຍຄວາມພາກພູມໃຈວ່າ: ແຕ່ກ່ອນຊີວິດຄອບຄົວພົບຄວາມຫຍຸ້ງຍາກແທ້ໆເຮັດການຜະລິດແບບດັ້ງເດີມປູກຝັງລ້ຽງສັດແບບປະຖົມປະຖານແມ່ນແຕ່ອາຫານການກິນຍັງບໍ່ກຸ້ມຄອບຄົວ. ແຕ່ພໍຫັນມາເອົາດີດ້ານການລ້ຽງປາ ແລະ ປູກຢາງພາລາຂາຍເປັນສິນຄ້າຊີວິດກໍຄ່ອຍໆດີຂຶ້ນຕາມລຳດັບ. ສຳລັບອາຊີບລ້ຽງປານີ້, ລຸງ ສົມຈິດ ໄດ້ເຮັດມາຢ່າງຕໍ່ເນື່ອງເປັນເວລາຍາວນານເຖິງ 26 ປີເຕັມ ຊຶ່ງຜົນງານຈາກເຫື່ອແຮງນີ້ສາມາດສົ່ງລູກຮຽນຈົບມະຫາວິທະຍາໄລເຖິງ 2 ຄົນ ແລະ ມີວຽກເຮັດງານທຳໝົດແລ້ວ, ພ້ອມທັງມີຊັບສິນມີຄ່າລວມທັງພາຫະນະໃຫຍ່-ນ້ອຍຮັບໃຊ້ຄອບຄົວ, ມີເຮືອນຊານບ້ານຊ່ອງແບບຖາວອນ 1 ຫລັງ ແລະ ມີເງິນເກັບໄວ້ໃຊ້ຍາມຈຳເປັນອີກດ້ວຍ.

ໃນໂອກາດອັນດີນີ້, ເຈົ້າຂອງກິດຈະການຕົວຈິງດັ່ງ ລຸງ ສົມຈິດ ຍັງໄດ້ຝາກຄວາມຫວັງເຖິງຂະແໜງການທີ່ກ່ຽວຂ້ອງຂອງເມືອງນາໝໍ້ ຊ່ວຍສະໜັບສະໜຸນຊອກຫາຊ່ອງທາງ ຫລືຕະຫລາດຈຳໜ່າຍຜົນຜະລິດປາໃຫ້ກວ້າງຂວາງກວ່າເກົ່າ ພ້ອມທັງຖືກຕ້ອງຕາມການຈັດແບ່ງທີ່ກຳນົດ ເພື່ອໃຫ້ກະສິກອນສາມາດສ້າງລາຍຮັບເພີ່ມຂຶ້ນ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ. ນີ້ຖືວ່າເປັນອີກໜຶ່ງບົດຮຽນ ແລະ ແຮງບັນດານໃຈທີ່ ລຸງ ສົມຈິດ ໄດ້ພິສູດໃຫ້ກັບຄົນຮຸ່ນປັດຈຸບັນເຫັນວ່າ ຄວາມອົດທົນ ແລະ ຂະຫຍັນໝັ່ນພຽນບໍ່ເຄີຍທຳລາຍໃຜມີແຕ່ຈະສ້າງຄວາມຮັ່ງມີ ແລະ ຄວາມໝັ້ນຄົງໃຫ້ກັບຄອບຄົວຢ່າງແທ້ຈິງ.

ໂດຍ: ເຂົ້າຈານນ້ຳ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

◆ ເຫດການ · 14:48 ໂມງ · ອ່ານ 9 ຄັ້ງ

ລົດບັນທຸກຕູ້ຄອນເທນເນີ ແຫກໂຄ້ງປີ້ນຢູ່ສົ້ນຂົວນ້ຳພຽງ ແຂວງໄຊຍະບູລີ!



ວັນທີ 11 ພະຈິກ 2026 ເວລາປະມານ 10:30 ໂມງ, ເກີດອຸບັດຕິເຫດລົດຫົວລາກ (ຕູ້ຄອນເທນເນີ) ຂັບມາດ້ວຍຄວາມໄວ ແລ້ວເສຍຫຼັກເລີຍໂຄ້ງປີ້ນ ຢູ່ບໍລິເວນສົ້ນຂົວນ້ຳພຽງ ບ້ານເມືອງພຽງ ເມືອງພຽງ ແຂວງໄຊຍະບູລີ.

ເບື້ອງຕົ້ນ, ຄົນຂັບເປັນຊາວຈີນ ໄດ້ຮັບບາດເຈັບ 1 ຄົນ ເຈົ້າໜ້າທີ່ກຳລັງນຳສົ່ງໂຮງໝໍ.

⚠️ ຝາກເຕືອນຜູ້ໃຊ້ລົດໃຊ້ຖະໜົນ: ເຖິງເສັ້ນທາງຈະດີແລ້ວ ກໍຂໍໃຫ້ຂັບຂີ່ດ້ວຍຄວາມລະມັດລະວັງ ຫຼຸດຄວາມໄວເວລາເຂົ້າໂຄ້ງ ເພື່ອຄວາມປອດໄພຂອງທຸກຄົນ.

(ດ້ວຍຄວາມຫ່ວງໃຍ ຈາກທີມງານຂົວທາງ)

#ຂ່າວດ່ວນ #ອຸບັດຕິເຫດ #ເມືອງພຽງ #ໄຊຍະບູລີ #ຂົວນ້ຳພຽງ #ຂັບຂີ່ປອດໄພ

◆ ເຫດການ · 16:01 ໂມງ · ອ່ານ 4 ຄັ້ງ

ບໍ່ລອດ! ປກສ ເມືອງຈຳປາສັກ ລວບໄວລຸ້ນໄວ 18 ປີ ກໍ່ເຫດລັກລົດຈັກເພື່ອນບ້ານ ແຖມພົວພັນຢາເສບຕິດ!



ເຈົ້າໜ້າທີ່ ປກສ ເມືອງຈຳປາສັກ ແຂວງຈຳປາສັກ ໄດ້ກັກຕົວ ທ້າວ ທິງໂທນ ອາຍຸ 18 ປີ ຢູ່ບ້ານທົ່ມຈານ ໃນຂໍ້ຫາລັກຊັບພົນລະເມືອງ (ລັກລົດຈັກ) ແລະ ເສບຢາເສບຕິດ.

ຜ່ານການສອບສວນ ຜູ້ກ່ຽວຮັບສາລະພາບວ່າ ໃນວັນທີ 14 ຕຸລາ 2026 ໄດ້ຍ່າງຜ່ານເຮືອນຄົນບ້ານດຽວກັນ ເຫັນລົດຈັກຮອນດາເວັບ 100S ຈອດສຽບກະແຈປະໄວ້ ຈຶ່ງລັກຂີ່ໜີເພື່ອຈະເອົາໄປຂາຍ. ແຕ່ຂີ່ໄປໄດ້ພຽງ 800 ແມັດ ລົດເກີດມອດໂດຍບໍ່ຮູ້ສາເຫດ ຈຶ່ງຖີ້ມລົດປະໄວ້ແລ້ວຍ່າງກັບເຮືອນ.

ຈົນມາຮອດວັນທີ 3 ພະຈິກ 2026 ຜູ້ກ່ຽວໄດ້ໄປຊື້ຢາບ້າຢູ່ເຂດບ້ານຈິກທາງໂງ ຈຶ່ງຖືກເຈົ້າໜ້າທີ່ກັກຕົວມາດຳເນີນຄະດີ. ປັດຈຸບັນ ທາງເຈົ້າໜ້າທີ່ໄດ້ມອບລົດຈັກຄືນໃຫ້ເຈົ້າຂອງແລ້ວ.

⚠️ ຝາກເຕືອນໄພ: ຈອດລົດຢູ່ເຮືອນກໍ່ຢ່າລືມຖອດກະແຈ ແລະ ລັອກຄໍລົດໃຫ້ດີ ປ້ອງກັນໂຈນສວຍໂອກາດ!

#ຂ່າວທ້ອງຖິ່ນ #ຈຳປາສັກ #ລັກລົດຈັກ #ຢາເສບຕິດ #ປກສເມືອງຈຳປາສັກ #ເຕືອນໄພ

ທີ່ມາ: ຂ່າວ ເມືອງຈຳປາສັກ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 14:15 ໂມງ · ອ່ານ 11 ຄັ້ງ

ຫາຍາກ! ພົບປາເບີບັອດ (Burbot) ສີເຫຼືອງທອງຫາຍາກໃນທ່າເຮືອລັດມິວ ຢອກ ທີ່ຢູ່ໃນພາວະເມັດສີຜິດປົກກະຕິ ພົບໄດ້ຍາກກວ່າປາເຜືອກ ແລະ ມີສະພາບ ຮ່າງກາຍທີ່ຈ່ອຍ



ການເປັນການຄົ້ນພົບທີ່ສ້າງຄວາມຕື່ນຕາຕື່ນໃຈໃຫ້ກັບວົງການສຳຫຼວດສັດນ້ຳ ຫຼັງນັກຊີວະວິທະຍາຈາກສຳນັກງານປະມົງ ແລະ ສັດປ່າແຫ່ງສະຫະລັດ (U.S. Fish and Wildlife Service) ພົບປາ Burbot ທີ່ມີສີເຫຼືອງທອງສົດໃສຜິດປົກກະຕິ ລະຫວ່າງການສຳຫຼວດສັດນ້ຳຢູ່ທ່າເຮືອ Oswego Harbor ເມືອງ Oswego ລັດນິວຢອກ ສະຫະລັດ ໃນເດືອນຕຸລາທີ່ຜ່ານມາ.

ຕາມລາຍງານຂອງທາງການສະຫະລັດ ເຜີຍແຜ່ເມື່ອວັນທີ 10 ພະຈິກ 2026 ລະບຸວ່າ ປາໂຕທີ່ພົບເປັນປາ Burbot (Lota lota) ເຊິ່ງເປັນປາພື້ນເມືອງຂອງເຂດທະເລສາບເກຣດເລັກ (Great Lakes) ແຕ່ມີສີລຳຕົວເຫຼືອງສົ້ມສົດໃສຈົນແຕກຕ່າງຈາກປາທົ່ວໄປຢ່າງຊັດເຈນ.

Burbot = ปาเบิบ้อด (ชื่อปาชะนิดหนึ่ง มีชื่อวิทะยาสาด Lota lota) เป็นปาน้ำจืดที่มักอาไสยู่ในน้ำเย็น.

ผູ້ຊ່ຽວຊານລະບຸວ່າ ປາໂຕນີ້ມີພາວະ Xanthochromism ຫຼື ພາວະເມັດສີເຫຼືອງຜິດປົກກະຕິ ເຊິ່ງເກີດຈາກຄວາມຜິດປົກກະຕິທາງພັນທຸກຳ ສົ່ງຜົນໃຫ້ລຳຕົວປາປົກຄຸມເປັນສີເຫຼືອງ ຫຼື ສີສົ້ມເຂັ້ມ. ພາວະນີ້ພົບໄດ້ຍາກໃນປ່າທຳມະຊາດ ແລະ ພົບໄດ້ໜ້ອຍກວ່າພາວະຜິວເຜືອກ (Albinism) ແລະ ພາວະເມັດສີເຂັ້ມຜິດປົກກະຕິ (Melanism) ອີກດ້ວຍ.

ການພົບປາໂຕນີ້ຍິ່ງມີຄວາມໜ້າສົນໃຈ ເນື່ອງຈາກປະຊາກອນປາ Burbot ໃນພື້ນທີ່ມີຈຳນວນຄ່ອນຂ້າງໜ້ອຍ ແລະ ປາຊະນິດນີ້ມັກອາໄສຢູ່ໃນເຂດນ້ຳເລິກ ແລະ ມີອຸນຫະພູມເຢັນ ຫຼາຍກວ່າບໍລິເວນທ່າເຮືອ. ນອກຈາກນີ້ ຍັງເປັນການບັນທຶກການພົບປາ Burbot ຄັ້ງທຳອິດຈາກການສຳຫຼວດປະຊາກອນປາຢູ່ທ່າເຮືອ Oswego Harbor ເຖິງ ແມ່ນວ່າກ່ອນໜ້ານີ້ຈະມີລາຍງານຈາກນັກຕົກປາຢູ່ບາງຄັ້ງກໍຕາມ.

ຢ່າງໃດກໍຕາມ ເມື່ອເຈົ້າໜ້າທີ່ກວດສອບສະພາບຂອງປາ ພົບວ່າມັນມີຮ່າງກາຍຜອມໂຊ ແລະ ມີສຸຂະພາບບໍ່ແຂງແຮງ. ນັກຊີວະວິທະຍາດ້ານປະມົງຈາກສຳນັກງານສຳຫຼວດທໍລະນີວິທະຍາສະຫະລັດ (USGS) ຈຶ່ງສົ່ງປາໂຕນີ້ໄປຍັງວິທະຍາໄລສັດວະແພດ Cornell University College of Veterinary Medicine ເພື່ອກວດວິເຄາະສຸຂະພາບ ແລະ ຊອກຫາສາເຫດທີ່ປະຊາກອນປາຊະນິດນີ້ຫຼຸດລົງຢ່າງຕໍ່ເນື່ອງ.

ທາງການຄາດຫວັງວ່າ ການຄົ້ນພົບປາທີ່ຫາຍາກໂຕນີ້ ອາດຊ່ວຍໃຫ້ນັກວິທະຍາສາດເຂົ້າໃຈສຸຂະພາບ ແລະ ສະຖານະຂອງປະຊາກອນປາ Burbot ໃນເຂດທະເລສາບເກຣດເລັກໄດ້ຫຼາຍຂຶ້ນ ເພື່ອນຳຂໍ້ມູນໄປໃຊ້ວາງແຜນການອະນຸລັກ ແລະ ຟື້ນຟູປະຊາກອນປາຊະນິດນີ້ໃນອະນາຄົດ.

“ທີມງານສຳຫຼວດສັດນ້ຳຕ່າງຖິ່ນ ສະແດງປາ Burbot ສີເຫຼືອງທອງທີ່ຫາຍາກ ຫຼັງຄົ້ນພົບໃນທ່າເຮືອ Oswego ລັດນິວຢອກ.”

ການຄົ້ນພົບຄັ້ງນີ້ ບໍ່ພຽງແຕ່ສ້າງຄວາມຕື່ນເຕັ້ນຈາກສີສັນທີ່ແປກຕາຂອງປາເທົ່ານັ້ນ ແຕ່ຍັງສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງການສຳຫຼວດສັດນ້ຳຢ່າງຕໍ່ເນື່ອງ ເພາະການພົບສັດນ້ຳທີ່ຫາຍາກອາດເປັນກະແຈສຳຄັນໃນການຮັກສາຄວາມສົມດຸນຂອງລະບົບນິເວດທາງນ້ຳ.

ແຫລ່ງທີ່ມາ: U.S. Fish and Wildlife Service

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ຂ່າວຕ່າງປະເທດ · 14:44 ໂມງ · ອ່ານ 10 ຄັ້ງ

ສ້າງອີລະກຳຈົນໄດ້ທຶນ! ແຮກຄູນເມົາທີ່ເຄີຍກໍ່ເຫດບຸກຮ້ານເຫຼົ້າຈົນເປັນໄອຣັລ ຫຼ້າສຸດກາຍເປັນ ຮີໂຮ່ລະດົມທຶນໄດ້ກວ່າ 280,000 ໂດລາ ເພື່ອຊ່ວຍດູແລສັດທີ່ຖືກຖິ້ມໃນສະຫະລັດ!



ເກືອບ 1 ປີ ຫຼັງຈາກເຫດການແຮກຄູນເມົາຈົນຖືກຈັບໄດ້ພາຍໃນຮ້ານຈຳໜ່າຍເຫຼົ້າ Virginia ABC ໃນລັດເວີຈິເນຍ ປະເທດສະຫະລັດ ແຄມເປນລະດົມທຶນທີ່ມີແຮກຄູນໂຕນີ້ເປັນຈຸດເດັ່ນ ສາມາດລະດົມເງິນໄດ້ເຖິງ 250,000 ໂດລາ ເພື່ອມອບໃຫ້ແກ່ພະແນກຄວບຄຸມສັດເມືອງ Hanover County

ເງິນບໍລິຈາກຈາກແຄມເປນ “Trashed Panda” ຈະຖືກນຳໄປສະໜັບສະໜຸນຄ່າໃຊ້ຈ່າຍຫຼາຍກວ່າເຄິ່ງໜຶ່ງ ໃນການຈັດຊື້ອຸປະກອນໃໝ່ ເພື່ອຊ່ວຍໃຫ້ເຈົ້າໜ້າທີ່ບັນທຶກຫຼັກຖານ ແລະ ເກັບຂໍ້ມູນໃນການສືບສວນຄະດີ ທາລຸນສັດໄດ້ຢ່າງມີປະສິດທິພາບ.

ຈາກເຫດການສຸດປ່ວນຂອງແຮກຄູນໂຕໜຶ່ງ ທີ່ບຸກເຂົ້າຮ້ານຈຳໜ່າຍເຫຼົ້າໃນລັດເວີຈິເນຍ ປະເທດສະຫະລັດ ຈົນຂ້າວຂອງເສຍຫາຍ ແລະ ຕົນເອງນອນສະຫຼົບຢູ່ພື້ນຫ້ອງນ້ຳ ກັບກາຍເປັນເຫດການທີ່ສ້າງກະແສຄວາມສົນໃຈໃນໂລກອອນລາຍ ແລະ ນຳໄປສູ່ການລະດົມທຶນໄດ້ຫຼາຍກວ່າ 280,000 ໂດລາ ເພື່ອຊ່ວຍເຫຼືອສັດທີ່ຢູ່ໃນການດູແລຂອງສູນພັກພິງສັດເມືອງ Hanover County.

ເຫດການນີ້ເກີດຂຶ້ນເກືອບ 1 ປີ ກ່ອນ ເມື່ອແຮກຄູນໂຕດັ່ງກ່າວບຸກເຂົ້າໄປໃນຮ້ານ Virginia ABC ແລະ ກໍ່ຄວາມວຸ້ນວາຍຈົນຂວດເຫຼົ້າແຕກກະຈາຍເຕັມຮ້ານ ກ່ອນຈະຖືກພົບໃນສະພາບມຶນເມົາ ແລະ ນອນໝົດສະຕິຢູ່ພື້ນຫ້ອງນ້ຳ. ເລື່ອງລາວສຸດແປກນີ້ກາຍເປັນທີ່ມາຂອງແຄມເປນລະດົມທຶນຊື່ວ່າ “Trashed Panda” ໂດຍມີການຈຳໜ່າຍເສື້ອທີ່ມີລວດລາຍກ່ຽວກັບແຮກຄູນໂຕນີ້.

ທ່ານ Jeffrey Parker ຫົວໜ້າຝ່າຍຄຸ້ມຄອງສັດຂອງເມືອງ Hanover County ເປີດເຜີຍວ່າ ແຄມເປນດັ່ງກ່າວສາມາດລະດົມເງິນໄດ້ປະມານ 280,000 ໂດລາ ນັບຕັ້ງແຕ່ເລີ່ມຕົ້ນເມື່ອປີກ່ອນ. ທ່ານຍອມຮັບວ່າຮູ້ສຶກຕົກໃຈກັບຈຳນວນເງິນທີ່ລະດົມໄດ້ ແຕ່ກໍຮູ້ສຶກຂອບໃຈຢ່າງຫຼາຍ ເພາະເງິນທັງໝົດຈະຖືກນຳກັບມາຊ່ວຍເຫຼືອສັດທີ່ຢູ່ໃນສູນ.

ໜຶ່ງໃນໂຄງການສຳຄັນທີ່ຈະໄດ້ຮັບທຶນ ແມ່ນການຈັດຊື້ກ້ອງຕິດຕົວ (Body Camera) ໃຫ້ເຈົ້າໜ້າທີ່ຄຸ້ມຄອງສັດ ເພື່ອບັນທຶກພາບຂະນະລົງປະຕິບັດວຽກ ໂດຍທຶນຈາກແຄມເປນຈະຄອບຄຸມຄ່າອຸປະກອນທັງໝົດ ແລະ ຄ່າບໍລິການໃນປີທຳອິດ.

ທ່ານ Parker ລະບຸວ່າ ກ້ອງດັ່ງກ່າວຈະຊ່ວຍເພີ່ມຄວາມປອດໄພໃຫ້ເຈົ້າໜ້າທີ່, ສ້າງຄວາມໂປ່ງໃສໃນການເຮັດວຽກ ແລະ ເປັນຫຼັກຖານສຳຄັນໃນການສືບສວນຄະດີທາລຸນສັດ. ນອກນັ້ນ ຍັງຊ່ວຍກວດສອບຄຳຮ້ອງຮຽນກ່ຽວກັບການປະຕິບັດງານຂອງພະນັກງານ ແລະ ຫຼຸດຜ່ອນຄວາມຜິດພາດໃນການລາຍງານເຫດການ.

ຄາດວ່າ ເຈົ້າໜ້າທີ່ຈະເລີ່ມຝຶກອົບຮົມໃນໄລຍະ 2-3 ເດືອນ ແລະ ກຳນົດເລີ່ມນຳກ້ອງມາໃຊ້ຈິງໃນວັນທີ 4 ມັງກອນ 2027. ສ່ວນຄ່າບໍລິການໃນປີທີ 2 ຫາປີທີ 5 ຈະເປັນຄວາມຮັບຜິດຊອບຂອງງົບປະມານເມືອງ.

ນອກຈາກກ້ອງຕິດຕົວແລ້ວ ເງິນທຶນທີ່ເຫຼືອຍັງຈະຖືກນຳໄປປັບປຸງສູນພັກພິງສັດ ເຊັ່ນ ສ້າງບ່ອນພັກອາໄສສັດໃໝ່, ຈັດຊື້ຂອງຫຼິ້ນ, ສ້າງໂຮງເກັບອາຫານສັດທີ່ຄວບຄຸມອຸນຫະພູມໄດ້ ພ້ອມທັງຈັດຕັ້ງຖັງແຈກຢາຍອາຫານ ແລະ ສິ່ງຂອງຈຳເປັນໃຫ້ແກ່ຊຸມຊົນ ແລະ ສັດລ້ຽງ.

ທາງພະແນກລະບຸວ່າ ເງິນທຶນຈະຖືກແບ່ງໃຊ້ທັງໃນວຽກງານພາກສະໜາມ ແລະ ວຽກງານພາຍໃນສູນພັກພິງສັດ ໂດຍມີເປົ້າໝາຍນຳເງິນທັງໝົດໄປໃຊ້ເພື່ອປະໂຫຍດຂອງສັດ.

ສ່ວນແຮກຄູນຕົວກໍ່ເຫດທີ່ກາຍເປັນດາວດັງຈາກເຫດການນີ້ ທ່ານ Parker ກ່າວວ່າ ບໍ່ຮູ້ວ່າປັດຈຸບັນມັນຢູ່ໃສ ແຕ່ກໍຫວັງວ່າມັນຈະມີຊີວິດທີ່ດີ ແລະ ບໍ່ກັບໄປບຸກຮ້ານຄ້າສ້າງຄວາມວຸ້ນວາຍອີກ.

ທ່ານຍັງກ່າວຕິດຕະຫຼົກວ່າ ຫວັງວ່າແຮກຄູນໂຕນັ້ນຈະໃຊ້ຊີວິດຢ່າງສະຫງົບ ແລະ “ເປັນຊີວິດທີ່ປອດເຫຼົ້າ”.

ຈາກເຫດການສຸດປ່ວນທີ່ເຄີຍສ້າງສຽງຫົວໃຫ້ຜູ້ຄົນ ກັບກາຍເປັນພະລັງໃນການລະດົມທຶນ ເພື່ອຍົກລະດັບການດູແລ ແລະ ປົກປ້ອງສັດຈຳນວນຫຼາຍ ນັບເປັນອີກເລື່ອງລາວທີ່ປ່ຽນຈາກຄວາມວຸ້ນວາຍ ໃຫ້ກາຍເປັນປະໂຫຍດຕໍ່ສັງຄົມ.

ທີ່ມາ: wbtv

ໂຄສະນາ


ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 11:17 ໂມງ · ອ່ານ 10 ຄັ້ງ

ລະທຶກ! ລົດເມຕຳກວາດເອົາລົດ 32 ຄັນໃນເກົາຫຼີໃຕ້ ບາດເຈັບ 57 ຄົນ ໃນນັ້ນສາຫັດ 9 ຄົນ.



ເກີດເຫດລົດໂດຍສານພຸ່ງຕຳລົດຫຼາຍຄັນໃນເຂດບຸນດັງ (Bundang) ເມືອງຊອງນຳ (Seongnam) ທາງຕອນໃຕ້ຂອງກຸງໂຊລ ປະເທດເກົາຫຼີໃຕ້ ສົ່ງຜົນໃຫ້ມີຜູ້ບາດເຈັບ 57 ຄົນ ໃນນັ້ນມີອາການສາຫັດ 9 ຄົນ ແລະ ບາດເຈັບເລັກນ້ອຍ 48 ຄົນ ຕາມລາຍງານຂອງສຳນັກງານດັບເພີງແຫ່ງຊາດ.

07:34 ໂມງ ວັນພຸດ ທີ 11 ພະຈິກ 2026 ຕາມເວລາເກົາຫຼີໃຕ້ ໄດ້ເກີດເຫດລົດເມໂດຍສານແລ່ນຕຳລົດຫຼາຍຄັນໃນເຂດບຸນດັງ (Bundang) ປະເທດເກົາຫຼີໃຕ້ ສົ່ງຜົນໃຫ້ມີຜູ້ບາດເຈັບອາການສາຫັດ 9 ຄົນ ແລະບາດເຈັບເລັກນ້ອຍ 48 ຄົນ ຕາມລາຍງານຂອງສຳນັກງານດັບເພີງ.

ສຳນັກງານດັບເພີງແຫ່ງຊາດລະບຸວ່າ ລົດເມໄດ້ແລ່ນຕຳລົດຫຼາຍຄັນໃນເວລາປະມານ 07:34 ໂມງ ຂອງວັນພຸດ (11 ພະຈິກ) ຕາມເວລາທ້ອງຖິ່ນ ລວມທັງລົດບາງຄັນທີ່ຈອດລໍຖ້າສັນຍານໄຟຈະລາຈອນ ກ່ອນທີ່ລົດເມຈະພຸ່ງຕຳແຜງກັ້ນກາງຖະໜົນ ໂດຍອ້າງອີງຄຳໃຫ້ການຂອງພະຍານ.

ອຸບັດຕິເຫດຄັ້ງນີ້ເກີດຂຶ້ນໃນເຂດບຸນດັງ ເມືອງຊອງນຳ (Seongnam) ທາງຕອນໃຕ້ຂອງກຸງໂຊລ ໂດຍມີພາຫະນະກ່ຽວຂ້ອງລວມ 32 ຄັນ ປະກອບມີລົດເມ 4 ຄັນ, ລົດບັນທຸກ 1 ຄັນ ແລະ ລົດເກັ່ງສ່ວນບຸກຄົນ 27 ຄັນ ຕາມຂໍ້ມູນຈາກສຳນັກງານດັບເພີງ.

ສຳນັກງານດັບເພີງລະບຸວ່າ ໄດ້ລະດົມກຳລັງເຈົ້າໜ້າທີ່ 88 ຄົນ ແລະລົດປະຕິບັດການ 33 ຄັນ ເຂົ້າໄປຍັງຈຸດເກີດເຫດ ພ້ອມທັງຈັດຕັ້ງຈຸດປະຖົມພະຍາບານສຸກເສີນ.

ພາບຖ່າຍຈາກຈຸດເກີດເຫດເຜີຍໃຫ້ເຫັນດ້ານໜ້າຂອງລົດເມທີ່ພັງເສຍຫາຍຢ່າງໜັກ ໂດຍຕິດຢຸດຢູ່ເທິງແຜງກັ້ນກາງຖະໜົນ.


ສ່ວນຄົນຂັບລົດເມກໍໄດ້ຮັບບາດເຈັບ ແລະຖືກນຳຕົວສົ່ງໂຮງໝໍ ຫຼັງຈາກເຈົ້າໜ້າທີ່ຊ່ວຍນຳຕົວອອກຈາກລົດ ຕາມລາຍງານຂອງສະຖານີໂທລະພາບ KBS.

ຂະນະທີ່ຕຳຫຼວດກຽມສືບສວນຫາສາເຫດຂອງອຸບັດຕິເຫດ ໂດຍຈະນຳຂໍ້ມູນຈາກກ້ອງບັນທຶກພາບໜ້າລົດ ແລະພາບຈາກກ້ອງວົງຈອນປິດ (CCTV) ມາກວດສອບ ຕາມລາຍງານຂອງສຳນັກຂ່າວ SBS.

ແຫລ່ງທີ່ມາ: SBSNEWS / Reuters / channelnewsasia

ຂ່າວຕ່າງປະເທດ · 11:19 ໂມງ · ອ່ານ 9 ຄັ້ງ

ທະນາຄານອິນໂດເນເຊຍ! ເລັ່ງເສີມລະບົບຄວາມປອດໄພ ຈາກການແຮັກ ພົບການໂຈມຕີ 1.6 ລ້ານເທື່ອໃນ 24 ຊົ່ວໂມງ



ລັດຖະບານອິນໂດເນເຊຍຮຽກຮ້ອງໃຫ້ທະນາຄານພາຊະນິດ (ທະນາຄານທຸລະກິດ) ຍົກລະດັບລະບົບຮັກສາຄວາມປອດໄພທາງໄຊເບີ ເພື່ອຮັບມືກັບໄພແຮກເກີທີ່ເພີ່ມຂຶ້ນ ຫຼັງພົບກິດຈະກຳທີ່ເຂົ້າຂ່າຍໄພຖຸກຄາມທາງໄຊເບີຖືກສະກັດກັ້ນເຖິງ 1.6 ລ້ານເທື່ອພາຍໃນ 24 ຊົ່ວໂມງ.

ທ່ານ ແອຣ໌ລັງກາ ຮາຣ໌ຕາ໌ໂກ ລັດຖະມົນຕີປະສານງານດ້ານເສດຖະກິດຂອງອິນໂດເນເຊຍ ລະບຸວ່າ ທະນາຄານທຸກແຫ່ງຈຳເປັນຕ້ອງພັດທະນາລະບົບປ້ອງກັນໄພທາງດິຈິຕອນຢ່າງຕໍ່ເນື່ອງ ເພື່ອປົກປ້ອງລະບົບຂອງຕົນເອງຈາກການໂຈມຕີທາງໄຊເບີທີ່ອາດຈະເກີດຂຶ້ນ.

ທ່ານແອຣ໌ລັງກາ ກ່າວຕໍ່ຜູ້ສື່ຂ່າວທີ່ສຳນັກງານຂອງລາວໃນນະຄອນຫຼວງຈາກາຕາ ເມື່ອວັນຈັນຜ່ານມາວ່າ ທະນາຄານແຕ່ລະແຫ່ງຕ້ອງໃຫ້ຄວາມສຳຄັນກັບການເສີມສ້າງຄວາມປອດໄພທາງໄຊເບີ ໂດຍສະເພາະໃນຍຸກທີ່ລະບົບການເຣັດທຸລະກຳທາງການເງິນປ່ຽນມາຢູ່ເທິງແພລຕຟອມດິຈິຕອນຫຼາຍຂຶ້ນ ເຊິ່ງຈຳເປັນຕ້ອງໄດ້ຮັບການດູແລຢ່າງຣັດກຸມ.

ລາວລະບຸວ່າ ໄພຖຸກຄາມທາງໄຊເບີໄມ່ໄດ້ເກີດຂຶ້ນສະເພາະໃນອິນໂດເນເຊຍ ແຕ່ເປັນຄວາມທ້າທາຍລະດັບໂລກ ເນື່ອງຈາກລະບົບທະນາຄານດິຈິຕອນໃນຫຼາຍປະເທດກຳລັງປະເຊີນກັບຄວາມພະຍາຍາມເຈາะລະບົບ ແລະ ທົດສອບປະສິດທິພາບໃນການຮັບມືກັບໄພຖຸກຄາມ.

ຄຳເຕືອນດັ່ງກ່າວມີຂຶ້ນໃນຊ່ວງທີ່ອາຊະຍາກຳທາງໄຊເບີກຳລັງເປັນໄພຕໍ່ພາກການເງິນທົ່ວໂລກ ໂດຍສະຖາບັນການເງິນໃນຫຼາຍປະເທດລາຍງານເຫດການລະບົບຮັກສາຄວາມປອດໄພຖືກລະເມີດ ແລະ ເກີດຄວາມຂັດຂ້ອງໃນຊ່ວງຫຼາຍເດືອນຜ່ານມາ.

ເມື່ອວັນພະຫັດທີ່ຜ່ານມາ ທະນາຄານເຄຣດິດ ມຸຕຸເອ ອາກີອາ (Crédit Mutuel Arkea) ຂອງຝຣັ່ງ ເປີດເຜີຍວ່າ ຖືກແຮກເກີຂໂມຍເງິນໄປປະມານ 100 ລ້ານເອີໂຣ ຫຼື ປະມານ 112.61 ລ້ານໂດລາສະຫະລັດ ໂດຍທະນາຄານກຳລັງດຳເນີນການຕິດຕາມ ແລະ ກູ້ຄືນເງິນທີ່ຖືກຂໂມຍໄປ ຂະນະທີ່ໄວຍະການຝຣັ່ງໄດ້ເປີດການສອບສວນເຫດການດັ່ງກ່າວ ເຊິ່ງຖືກເປີດເຜີຍຕໍ່ສາທາລະນະກ່ອນໜ້ານັ້ນໜຶ່ງວັນ.

ເຫດການນີ້ຖືເປັນກໍລະນີທີ່ເກີດຂຶ້ນບໍ່ເລື້ອຍປານໃດ ທີ່ອາຊະຍາກອນໄຊເບີສາມາດຂໂມຍເງິນຈາກທະນາຄານກະແສຫຼັກໄດ້ໂດຍງ.

ນອກຈາກນີ້ ສະຖາບັນການເງິນໃນຍີ່ປຸ່ນ, ໄຕ້ຫວັນ ແລະ ມາເລເຊຍ ຍັງປະເຊີນກັບເຫດການດ້ານຄວາມປອດໄພທາງໄຊເບີຫຼາຍຮູບແບບ ຕັ້ງແຕ່ການເຂົ້າເຖິງບັນຊີລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ, ການຂໂມຍຂໍ້ມູນ ຈົນເຖິງການສໍ້ໂກງທາງການເງິນ.

ອິນໂດເນເຊຍສະກັດໄພໄຊເບີ 1.6 ລ້ານຄັ້ງໃນ 24 ຊົ່ວໂມງ

ດ້ານ ຟໍຕິການ໌ດ ແລບສ໌ (FortiGuard Labs) ລາຍງານວ່າ ລະບົບກວດພົບ ແລະ ສະກັດກັ້ນກິດຈະກຳທີ່ເຂົ້າຂ່າຍໄພຖຸກຄາມທາງໄຊເບີໃນອິນໂດເນເຊຍໄດ້ປະມານ 1.6 ລ້ານຄັ້ງ ພາຍໃນໄລຍະເວລາ 24 ຊົ່ວໂມງ ຈົນເຖິງວັນຈັນ ຫຼື ສະເລ່ຍປະມານ 19 ຄັ້ງຕໍ່ວິນາທີ.

ຕໍ່ໜ້າ 11

ທະນາຄານອິນໂດເນເຊຍ! ເລັ່ງເສີມລະບົບຄວາມປອດໄພ ຈາກ... (ຕໍ່ຈາກໜ້າ 10)

ຢ່າງໃດກໍຕາມ ອາວຟອນສ໌ ຕານຸຈາຢາ (Alphons Tanujaya) ຜູ້ຊ່ຽວຊານດ້ານຄວາມປອດໄພທາງໄຊເບີ ລະບຸວ່າ ຕົວເລກດັ່ງກ່າວໄມ່ໄດ້ໝາຍຄວາມວ່າອິນໂດເນເຊຍກຳລັງປະເຊີນການໂຈມຕີທາງໄຊເບີທີ່ເພີ່ມຂຶ້ນຢ່າງຜິດປົກກະຕິສະເໝີໄປ ເນື່ອງຈາກກິດຈະກຳຈຳນວນຫຼາຍທີ່ລະບົບກວດພົບນັ້ນ ເປັນການສະແກນລະບົບໂດຍອັດຕະໂນມັດຈາກບອດເນັດ (Botnet) ແລະ ຊອບແວປະເພດອື່ນໆ ທີ່ເຮັດວຽກເພື່ອຄົ້ນຫາຊ່ອງໂຫວ່ດ້ານຄວາມປອດໄພ ຫຼາຍກວ່າທີ່ຈະເປັນການເຈາะເຂົ້າສູ່ລະບົບຄອມພິວເຕີໄດ້ສຳເລັດ.

ແຫຼ່ງຂ່າວ: Jakarta Globe

ຂ່າວຕ່າງປະເທດ · 09:47 ໂມງ · ອ່ານ 8 ຄັ້ງ

ອີຣານເປີດຕົວຖານລູກສອນໄຟໃຕ້ດິນແຫ່ງໃໝ່ ພ້ອມຂູ່ຕອບໂຕ້ຂະຫຍາຍວົງກວ້າງຫາກຖືກໂຈມຕີອີກ



ກອງກຳລັງພິທັກການປະຕິວັດອິດສະລາມອີຣານ ເຜີຍແຜ່ພາບຖານລູກສອນໄຟໃຕ້ດິນແຫ່ງໃໝ່ ໂດຍມີຜູ້ບັນຊາການລະດັບສູງເຂົ້າກວດກາຢ້ຽມຢາມ ພ້ອມເຕືອນສະຫະລັດ ແລະ ອິດສະຣາເອນ ຫາກໂຈມຕີອີຣານອີກ ການຕອບໂຕ້ຈະບໍ່ຈຳກັດຢູ່ພຽງແຕ່ໃນຕາເວັນອອກກາງເທົ່ານັ້ນ.

ກອງກຳລັງພິທັກການປະຕິວັດອິດສະລາມອີຣານ (IRGC) ໄດ້ເຜີຍແຜ່ຄລິບວິດີໂອສະຖານທີ່ຊຶ່ງລະບຸວ່າເປັນຖານລູກສອນໄຟໃຕ້ດິນແຫ່ງໃໝ່ ເມື່ອວັນອັງຄານທີ່ຜ່ານມາ ພ້ອມທັງເຜີຍແຜ່ພາບຜູ້ບັນຊາການທະຫານລະດັບສູງຢ່າງກວດກາຢ້ຽມຢາມພາຍໃນຖານທັບດັ່ງກ່າວ.

ສື່ທາງການອີຣານໄດ້ເຜີຍແຜ່ພາບຂອງ ອາລີ ອັບດຸລາຮີ ເສນາທິການກອງທັບອີຣານ ແລະ ມາຈິດ ມຸຊາວີ ຜູ້ບັນຊາການກອງກຳລັງອະວະກາດຂອງ IRGC ຂະນະທີ່ກຳລັງຍ່າງກວດກາພື້ນທີ່ສ່ວນຕ່າງໆ ພາຍໃນຖານລູກສອນໄຟໃຕ້ດິນ. ເຖິງຢ່າງໃດກໍຕາມ, ທາງການບໍ່ໄດ້ເຜີຍແຜ່ທີ່ຕັ້ງຂອງຖານທັບແຫ່ງນີ້ ລວມທັງບໍ່ໄດ້ລະບຸວ່າການເຂົ້າກວດກາຢ້ຽມຢາມເກີດຂຶ້ນເມື່ອໃດ.

ລະຫວ່າງການຢ້ຽມຊົມ, ອັບດຸລາຮີ ໄດ້ເຕືອນວ່າ ຫາກອີຣານຖືກໂຈມຕີອີກຄັ້ງ ການຕອບໂຕ້ຂອງອີຣານອາດຈະຂະຫຍາຍວົງກວ້າງອອກໄປນອກພາກພື້ນຕາເວັນອອກກາງ.

ລາວລະບຸວ່າ: "ຫາກສັດຕູເຄື່ອນໄຫວໂຈມຕີພວກເຮົາອີກຄັ້ງ ການຕອບໂຕ້ຂອງພວກເຮົາຈະຂະຫຍາຍອອກໄປນອກພາກພື້ນນີ້."

ກ່ອນໜ້ານີ້, ເມື່ອວັນເສົາທີ່ຜ່ານມາ ຮອດເຊນ ໂມເຮບີ ໂຄສົກຂອງ IRGC ໄດ້ປະກາດວ່າ ກອງກຳລັງພິທັກການປະຕິວັດອິດສະລາມກຳລັງກຽມເປີດຕົວຖານລູກສອນໄຟໃຕ້ດິນແຫ່ງໃໝ່ ໂດຍລະບຸວ່າ IRGC ໄດ້ຍ້າຍການຜະລິດລູກສອນໄຟບາງສ່ວນລົງໄປຢູ່ໃຕ້ດິນ ເພື່ອປ້ອງກັນຄວາມເສຍຫາຍຈາກການໂຈມຕີທາງອາກາດ ແລະ ຮັກສາຄວາມສາມາດໃນການດຳເນີນງານໃນຊ່ວງສົງຄາມ.

ນອກຈາກນີ້, ລາວຍັງໄດ້ເຕືອນອີກວ່າ ອີຣານອາດຈະນຳເອົາອາວຸດທີ່ບໍ່ເຄີຍເປີດເຜີຍມາກ່ອນອອກມາໃຊ້ງານ ຫາກການສູ້ຮົບກັບສະຫະລັດ ແລະ ອິດສະຣາເອນທະວີຄວາມຮຸນແຮງຂຶ້ນ.

ຄວາມເຄື່ອນໄຫວດັ່ງກ່າວເກີດຂຶ້ນໃນຊ່ວງທີ່ລັດຖະບານວໍຊິງຕັນກຳລັງພິຈາລະນາມາດຕະການທາງທະຫານເພີ່ມເຕີມຕໍ່ອີຣານ ຫຼັງຈາກທີ່ສະຫະລັດໄດ້ເປີດສາໂຈມຕີເກາะເກຊົມ (Qeshm) ເມື່ອຕົ້ນເດືອນທີ່ຜ່ານມາ.

ອີຣານພັດທະນາເຄືອຂ່າຍຖານລູກສອນໄຟໃຕ້ດິນ

ອີຣານໄດ້ໃຊ້ເວລາຫຼາຍປີໃນການພັດທະນາລະບົບຈັດເກັບ ແລະ ຖານຍິງລູກສອນໄຟໃຕ້ດິນ ຊຶ່ງເອີ້ນກັນວ່າ "ເມືອງລູກສອນໄຟ" (Missile Cities) ເພື່ອປົກປ້ອງສັ່ງຄັ່ງຄັ່ງອາວຸດຈາກການໂຈມຕີທາງອາກາດ ແລະ ເພີ່ມຂີດຄວາມສາມາດໃນການຕອບໂຕ້ທາງທະຫານ.

ຖານທັບໃຕ້ດິນເຫຼົ່ານີ້ເຄີຍຕົກເປັນເປົ້າໝາຍຂອງປະຕິບັດການທາງທະຫານຂອງອິດສະຣາເອນມາແລ້ວ ໂດຍໃນສົງຄາມເມື່ອປີທີ່ຜ່ານມາ ອິດສະຣາເອນໄດ້ໂຈມຕີຖານຍິງລູກສອນໄຟ ຄັງເກັບອາວຸດ ແລະ ໂຄງສ້າງພື້ນຖານທາງທະຫານທີ່ກ່ຽວຂ້ອງຂອງອີຣານ ເພື່ອບັ່ນທອນຂີດຄວາມສາມາດຂອງເຕຫະຣານໃນການຍິງລູກສອນໄຟຕອບໂຕ້.

ຂະນະທີ່ພາບຖ່າຍດາວທຽມຊຶ່ງສຳນັກຂ່າວຣອຍເຕີສ (Reuters) ໄດ້ກວດສອບເມື່ອເດືອນກຸມພາທີ່ຜ່ານມາ ສະແດງໃຫ້ເຫັນວ່າ ອີຣານກຳລັງສ້ອມແປງຖານທັບລູກສອນໄຟທີ່ໄດ້ຮັບຄວາມເສຍຫາຍຈາກສົງຄາມຄັ້ງດັ່ງກ່າວ ພ້ອມທັງດຳເນີນການເສີມຄວາມແຂງແກ່ນ ແລະ ພາງສະຖານທີ່ທາງທະຫານ ແລະ ນິວເຄຼຍທີ່ມີຄວາມອ່ອນໄຫວ.

ແຫຼ່ງຂ່າວ: Iraninternational

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 11:47 ໂມງ · ອ່ານ 7 ຄັ້ງ

ໜ້າຮັກແຖມຍັງເກັ່ງ! ນ້ອງ “ໂກຈິ” ໝາດົມກິ່ນປະຈຳເດີ່ນບິນສາກົນເອສເທິນຊິດນີ ປະເທດອົດສະຕຣາລີ ສ້າງຜົນງານມື້ທຳອິດ ກວດພົບກ້ອຍ-ໝາກພິສຕາຊິໂອ ເຊື່ອງໃນກະເປົ໋າຜູ້ໂດຍສານ!



ໃນມື້ທຳອິດຂອງການເປີດຮັບຖ້ຽວບິນຜູ້ໂດຍສານລະຫວ່າງປະເທດ ໝາດົມກິ່ນຊື່ ໂກຈິ (Goji) ແລະ ຜູ້ຄວບຄຸມຊື່ ເຄຕີ (Katie) ໄດ້ສ້າງຜົນງານການກວດພົບສິ່ງຂອງຕ້ອງຫ້າມຄັ້ງທຳອິດຂອງທີມ. ໂດຍພວກເຂົາສາມາດດົມກິ່ນກວດພົບກ້ອຍ ແລະ ໝາກພິສຕາຊິໂອ ທີ່ຜູ້ໂດຍສານບໍ່ໄດ້ແຈ້ງສຳແດງ ເຊິ່ງເຊື່ອງຢູ່ໃນກະເປົ໋າເດີນທາງ.

ໜ້າຮັກແຖມຍັງເກັ່ງ! ໝາດົມກິ່ນ “ໂກຈິ” ສ້າງຜົນງານມື້ທຳອິດ ກວດພົບກ້ອຍ-ໝາກພິສຕາຊິໂອ ເຊື່ອງໃນກະເປົ໋າຜູ້ໂດຍສານ!

